ສໍານັກງານໃຫຍ່

ເລກທີ 048 /ສພບ. ທຄຕລ. 2025

ນະຄອນຫຼວງວຽງຈັນ, ວັນທີ 05 ກັນຍາ 2025

# ມະຕິ

## ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈໍາປີ 2025

**ວັນທີ 05/09/2025**

ກອງປະຊຸມຜູ້ຖືຮຸ້ນ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນ ປະຈໍາປີ 2025 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ໄດ້ຈັດຂຶ້ນໃນເວລາ 14:30 ໂມງ ຂອງວັນສຸກ, ວັນທີ 05 ກັນຍາ 2025 ທີ່ຫ້ອງປະຊຸມ Grandball Room, ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ **ທ່ານ ສຸລິວັດ ສຸວັນນະຈູມຄໍາ,** ປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈໍານວນ **30** ທ່ານ, ຜູ້ມອບສິດຈໍານວນ **120** ທ່ານ ຊຶ່ງລວມຈໍານວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ **779,784,250** ຮຸ້ນ, ນັບທັງ **3,690,685** ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ **75.079%** ຂອງຈໍານວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດໍາເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສໍາລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈໍານວນ **258,832,250** ຮຸ້ນ ເທົ່າກັບ **24.921%** ຂອງຈໍານວນຮຸ້ນ ທຄຕລ ທັງໝົດ.

### ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິດັ່ງນີ້:

**ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝສາມັນ ປະຈໍາປີ 2024.**

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: 779,748,250 ສຽງ, ເທົ່າກັບ 100% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈໍານວນ: 0 ສຽງ, ເທົ່າກັບ 0% ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 02: ຮັບຮອງ ການດັດແກ້ແຜນທຸລະກິດ ຂອງ ທຄຕລ ປະຈໍາປີ 2025**

ກອງປະຊຸມຮັບຮອງເອົາການດັດແກ້ແຜນ ປະຈໍາປີ 2025 ເຊິ່ງມີຕົວເລກສໍາຄັນ ດັ່ງນີ້:

- **ຍອດຊັບສິນ:** ດັດແກ້ໃໝ່ ເປັນບໍ່ຫຼຸດ **157,000** ຕື້ກີບ ທຽບໃສ່ປະຕິບັດປີ **2024** ເພີ່ມຂຶ້ນ **10.41%;**
- **ຍອດເງິນຝາກ:** ດັດແກ້ໃໝ່ ເປັນບໍ່ຫຼຸດ **145,000** ຕື້ກີບ ທຽບໃສ່ປະຕິບັດປີ **2024** ເພີ່ມຂຶ້ນ **8.91%;**
- **ກໍາໄລສຸດທິ:** ດັດແກ້ໃໝ່ເປັນບໍ່ຫຼຸດ **576** ຕື້ກີບ ທຽບໃສ່ປະຕິບັດປີ **2024** ເພີ່ມຂຶ້ນ **28.12%;**
- **ແຜນປະກອບວັດຖຸເຕັກນິກ, ກໍ່ສ້າງ ແລະ ສ້ອມແປງ:** ດັດແກ້ໃໝ່ເປັນ **832.54** ຕື້ກີບ ເພີ່ມຂຶ້ນຈໍານວນ 27.87 ຕື້ກີບ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: **779,748,250** ສຽງ, ເທົ່າກັບ **100%** ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈໍານວນ: **0** ສຽງ, ເທົ່າກັບ **0%** ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 03: ຮັບຮອງ ການແຕ່ງຕັ້ງຮອງປະທານສະພາບໍລິຫານ ທຄຕລ**

ກອງປະຊຸມໄດ້ຮັບຮອງການແຕ່ງຕັ້ງ **ທ່ານ ນ. ບຸນຕາ ດາຣາວົງ** ເປັນຮອງປະທານສະພາບໍລິຫານ ທຄຕລ ຜູ້ໃໝ່, ເພື່ອປ່ຽນແທນ **ທ່ານ ປອ ອາຄົມ ປຣະສິດ** ທີ່ໄດ້ສິ້ນສຸດອາຍຸການເປັນຮອງປະທານສະພາບໍລິຫານ.

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: **779,748,250** ສຽງ, ເທົ່າກັບ **100%** ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈໍານວນ: **0** ສຽງ, ເທົ່າກັບ **0%** ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 04: ຮັບຮອງ ການແຕ່ງຕັ້ງສະມາຊິກສະພາບໍລິຫານ ທຄຕລ**

ກອງປະຊຸມໄດ້ຮັບຮອງການແຕ່ງຕັ້ງ **ທ່ານ ມີກາແອລ ເດີ ແຖູກ** ເປັນສະມາຊິກສະພາບໍລິຫານ ທຄຕລ ຜູ້ໃໝ່ ຕາມໜັງສືແຕ່ງຕັ້ງຈາກຂາຮຸ້ນຍຸດທະສາດ COFIBRED, ເພື່ອປ່ຽນແທນ **ທ່ານ ອາໄນ ເດໄລເນ.**

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈໍານວນ: **779,748,250** ສຽງ, ເທົ່າກັບ **100%** ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ;
- ບໍ່ເຫັນດີຈໍານວນ: **0** ສຽງ, ເທົ່າກັບ **0%** ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ການຮັບຮອງໃນຄັ້ງນີ້ ຈະເຮັດໃຫ້ສະພາບໍລິຫານຂອງ ທຄຕລ ຊຸດໃໝ່ ປະກອບດ້ວຍ **08** ທ່ານ ດັ່ງນີ້:

| | |
|---|---|
| 1. ທ່ານ ສຸລິວັດ ສຸວັນນະຈູມຄຳ | ຮອງລັດຖະມົນຕີກະຊວງການເງິນ, ປະທານສະພາບໍລິຫານ |
| 2. ທ່ານ ນ. ບຸນຕາ ດາຣາວີ | ກຳມະການອິດສະລະ, ຮອງປະທານສະພາບໍລິຫານ |
| 3. ທ່ານ ນ. ສາຍສະໝອນ ຈັນທະຈັກ | ຜູ້ອຳນວຍການ ທຄຕລ, ກຳມະການ |
| 4. ທ່ານ ປະສົມເພັດ ຄຳຕັນ | ກຳມະການ |
| 5. ທ່ານ ມິກາແອລ ເດີ ແກຼກ | ກຳມະການ |
| 6. ທ່ານ ຣສ. ທອງເພັດ ຈັນທະນີວົງ | ສະມາຊິກອິດສະລະ, ກຳມະການ |
| 7. ທ່ານ ນ. ລັດດາວັນ ຊີ່ງວິໄລ | ສະມາຊິກອິດສະລະ, ກຳມະການ |
| 8. ທ່ານ ສອນໄຊ ສີລາເພັດ | ສະມາຊິກອິດສະລະ, ກຳມະການ |

**ປະທານກອງປະຊຸມ**

**ທ່ານ ສຸລິວັດ ສຸວັນນະຈູມຄຳ**